ASEAN SME Academy

# ການປະເຊີນໜ້າກັບ **ສິ່ງທ້າທາຍ.**

# ເຮັດໃຫ້**ທຸລະກິດ ຂອງທ່ານ**ເຕີບໂຕ.




USAID FROM THE AMERICAN PEOPLE

US-ASEANCONNECT partnering for sustainable, innovative, economic growth

US-ASEAN



# ASEAN SME Academy

ການປະເຊີນໜ້າກັບ**ສິ່ງທ້າທາຍ.** ເຮັດໃຫ້**ທຸລະກິດຂອງທ່ານ**ເຕີບໂຕ

ບໍ່ວ່າຈະເປັນທຸລະກິດລິເລີ່ມໃໝ່ (Start-up), ຫຼືເປັນບໍລິສັດທີ່ກຳລັງຂະຫຍາຍຕົວ, ຫຼື ເປັນບໍລິສັດທີ່ພ້ອມແລ້ວ ທີ່ຈະສົ່ງອອກສິນຄ້າ - ມາຄົ້ນພົບວິທີ ທີ່ຈະເຮັດໃຫ້ທຸລະກິດ ຂອງທ່ານກ້າວໜ້າໄດ້ຈາກຫ້ອງຮຽນອອນລາຍຈາກພວກເຮົາ.

ສະຖາບັນຂອງພວກເຮົາສະໜອງການຝຶກອົບຮົມແບບບໍ່ເສຍຄ່າ ແລະ ສະໜອງຂໍ້ມູນກ່ຽວກັບ ແຫຼ່ງຊັບພະຍາກອນຕ່າງໆທີ່ຕ້ອງການ ສຳລັບການເຮັດທຸລະກິດ ຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ຢູ່ໃນອາຊຽນ.

ASEAN SME Academy

# ການສະໜັບສະໜູນ SMEs ຢູ່ໃນ ຂົງເຂດອາຊຽນ

SMEs ມີບົດບາດສໍາຄັນຕໍ່ເສດຖະກິດ ຂອງ ອາຊີຕາເວັນອອກສຽງໃຕ້. ເຊິ່ງທຸລະກິດດັ່ງກ່າວ ກວມເອົາຫຼາຍກວ່າ 96% ຂອງ ທຸລະກິດທັງໝົດ, ກວມເອົາ 50-95% ຂອງ ການຈ້າງງານທັງໝົດ, ແລະ ສ້າງລາຍຮັບກວມເອົາ 23-58% ຂອງ GDP.

ອາຊຽນ ມີຄວາມມຸ້ງໝັ້ນໃນການສົ່ງເສີມຄວາມກ້າວໜ້າ ຂອງ SME ເພີ່ມການເຕີບໂຕ, ການຫລຸດຜ່ອນຄວາມທຸກຍາກ ແລະ ຍົກສູງຄວາມສະເໜີພາບ. ການທີ່ຍົກສູງທາງດ້ານການແຂ່ງຂັນ, ການສ້າງຄວາມໝັ້ນຄົງ ແລະ ສ້າງຄວາມເຂັ້ມແຂງໃຫ້ SMEs ເພື່ອໃຫ້ສາມາດຄົງຕົວໄດ້. ເຊິ່ງຖືວ່າເປັນສິ່ງທີ່ສໍາຄັນ ເພາະວ່າມັນສາມາດຮັບປະກັນ ການມີສ່ວນຮ່ວມທີ່ເພີ່ມຂຶ້ນ ບັນດາວິສາຫະກິດເຫຼົ່ານີ້ ໂດຍການສ້າງໂອກາດທາງດ້ານເສດຖະກິດ ຈາກການເປັນສະມາຄົມເສດຖະກິດອາຊຽນ (AEC)

ເຖິງຢ່າງໃດກໍ່ຕາມຍັງມີ SMEs ຈໍານວນຫຼາຍທີ່ຍັງກໍາລັງພົບພໍ້ກັບສິ່ງທ້າທາຍ, ລວມທັງ ຄວາມຈໍາກັດທາງດ້ານຄວາມຮູ້ ທາງດ້ານ ວິທີໃນການບໍລິຫານ ແລະ ຂະຫຍາຍທຸລະກິດ.






ສະຖາບັນພວກເຮົາ (Academy) ມີຫຼັກສູດການຮຽນການສອນທີ່ຫຼາກຫຼາຍ ແລະ ແຫຼ່ງຂໍ້ມູນຕ່າງໆ ເພື່ອເປັນຄວາມຮູ້ຊ່ວຍເຫຼືອ ທຸລະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ໃນ ອາຊຽນ ເພື່ອຍົກສູງຄວາມສາມາດໃນການເຂົ້າເຖິງ ການເງິນ, ແຂ່ງຂັນກັບຕະຫຼາດໃນ ພາກພື້ນ ແລະ ສາກົນ, ນໍາໃຊ້ຂໍ້ມູນ ແລະ ການບໍລິການໃຫ້ຄໍາປຶກສາ, ແລະ ໃຫ້ມີຄວາມສາມາດທາງດ້ານ ເທັກໂນໂລຢີ ແລະ ນະວັດຕະກໍາ.

ເອກະສານການຮຽນອອນລາຍ ແມ່ນເພື່ອສົ່ງເສີມ SMEs ໃນ 3 ລະດັບ: ທຸລະກິດລິເລີ່ມໃໝ່ (Start-up), ກໍາລັງຂະຫຍາຍຕົວ, ແລະ ພ້ອມທີ່ຈະສົ່ງອອກ. ຫຼັກສູດຮຽນທີ່ຟຣີເຫຼົ່ານີ້ແມ່ນສາມາດຮຽນເອງໄດ້ ແລະ ຖືກອອກແບບມາເພື່ອໃຫ້ເຂົ້າກັບການຮຽນຫຼາຍຮູແບບ ແລະ ມີຫຼາຍຈຸດປະສົງ. ມີລາຍຊື່ຂອງ ບັນດາທຸລະກິດກໍານົດໄວ້ໃນພາກຂອງ ແຫຼ່ງຂໍ້ມູນເຊິ່ງມີການຈັດແບ່ງເປັນແຕ່ລະປະເພດ ເພື່ອ ໃຫ້ທ່ານສາມາດພົວພັນກັບທຸລະກິດທີ່ໃຫ້ການບໍລິການໃຫ້ແກ່ທ່ານໄດ້ໂດຍກົງ



# ເປັນຄູ່ຮ່ວມງານ
## ກັບບັນດາບໍລິສັດທີ່ມີຊື່ສຽງ

ທາງສະຖາບັນມີເອກະສານການຝຶກອົບຮົບຈາກ ບໍລິສັດທີ່ເປັນສະມາຊິກຂອງ Fortune 500 ທີ່ມີເຄື່ອຂ່າຍທາງດ້ານທຸລະກິດ ລະຫວ່າງ ສະຫະລັດອາເມລິກາ-ອາຊຽນ ແລະ ສາມາດເຊື່ອມໂຍງກັບຂໍ້ມູນທາງດ້ານທຸລະກິດໃນອາຊຽນ.

ນອກຈາກນັ້ນ, Academy ຍັງມີການສັງລວມເອກະສານຝຶກອົບຮົມ ທີ່ເນັ້ນໜັກໃສ່ SMEs ຈາກບັນດາອົງກອນ ໃນພາກພື້ນ ແລະ ສາກົນ. ໝາຍຄວາມວ່າ ຫຼັກສູດການຮຽນຂອງພວກເຮົາແມ່ນໄດ້ຜ່ານ ການຄັດເລືອກ, ຄັດຈ້ອນ ແລະ ທົດສອບ ເພື່ອຊ່ວຍໃຫ້ທຸລະກິດ ຂອງ ທ່ານເຕີບໂຕໄດ້.

ປະຈຸບັນ, ຫຼັກສູດການຮຽນການສອນ ຂອງ ພາກເຮົາແມ່ນໄດ້ຮັບການປະກອບສ່ວນຈາກ Baker & McKenzie, Facebook, Google, HP, ILO, Mastercard, Microsoft, Paypal, and P&G.

# ອົງປະກອບຂອງສະຖາບັນ

ທ່ານສາມາດເຂົ້າເຖິງສະຖາບັນໄດ້ໂດຍ ການເຂົ້າເຖິງ 3 ອົງປະກອບຫຼັກ ດັ່ງຕໍ່ໄປນີ້:
**ການຝຶກອົບຮົມ, ແຫລ່ງຂໍ້ມູນ ແລະ ການຈັດງານຕ່າງໆ**



## ການຝຶກອົບຮົມ:
### ມີຫຼັກສູດສໍາລັບ SMEs ທຸກໆລະດັບ

**Academy ປະກອບມີຫຼາຍຫົວຂໍ້ທີ່ສາມາດຊ່ວຍໃຫ້ທຸລະກິດຂອງ ທ່ານເຕີບໂຕຂະໜາດ, ໂດຍບໍ່ຈໍາກັດຂະໜາດ ຫຼື ໄລຍະຂັ້ນພັດທະນາຂອງທຸລະກິດ.**

ບໍ່ວ່າທຸລະກິດຂອງທ່ານ ຈະເປັນທຸລະກິດລິເລີ່ມໃໝ່ (Start-up), ທຸລະກິດທີ່ກໍາລັງຂະຫຍາຍຕົວ, ຫຼື ພ້ອມແລ້ວທີ່ຈະສົ່ງສິນຄ້າອອກ, ທຸລະກິດ ທຸກຂະໜາດແມ່ນມີທາງເລືອກຮຽນທີ່ຫຼາກຫຼາຍຢູ່ໃນ ສະຖາບັນ. ຫຼັກສູດການຮຽນ ແມ່ນໄດ້ມີການຈັດແບ່ງໂດຍອີງຕາມ ຂັ້ນພັດທະນາຂອງ ທຸລະກິດ ແລະ ວິຊາຮຽນໃນແຕ່ລະດັບການຂະຫຍາຍຕົວຂອງ ທຸລະກິດ

## ແຫຼ່ງຂໍ້ມູນ:
### ຫົວໜ່ວຍໃຫ້ບໍລິການທີ່ມີປະສົບການຊໍານານໃນແຕ່ລະປະເທດ

**ໃນພາກ ຂອງແຫຼ່ງຂໍ້ມູນ ຂອງ ສະຖາບັນ ມີລາຍຊື່ຂອງ ຫົວໜ່ວຍບໍລິການຫຼາຍຮ້ອຍຫົວໜ່ວຍໃນທົ່ວ 10 ປະເທດສະມາຊິກອາຊຽນ, ເຊິ່ງແມ່ນຫົວໜ່ວຍບໍລິການທີ່ຈະຊ່ວຍໃຫ້ທຸລະກິດຂອງທ່ານເຕີບໂຕ.**

ທ່ານສາມາດເລືອກ ປະເພດບໍລິການໃນປະເທດຂອງທ່ານ ຕາມຄວາມ ຕ້ອງການຂອງທ່ານໄດ້ ໂດຍຜ່ານ Academy ແລະ ຈາກນັ້ນ ທ່ານ ກໍ່ສາມາດພົບເຫັນລາຍຊື່ຂອງບັນດາຫົວໜ່ວຍບໍລິການ ທີ່ທ່ານສາມາດຕິດຕໍ່ໄດ້ ໂດຍກົງເພື່ອໃຫ້ພວກເຂົາ ຊ່ວຍທຸລະກິດ ຂອງທ່ານໄດ້.

ມີຫຼາຍ ລິ້ງ ເວັບໄຊທີ່ກ່ຽວກັບ ທຸລະກິດແມ່ຍິງ ຫຼື ທຸລະກິດທີ່ດໍາເນີນໂດຍແມ່ຍິງ, ພ້ອມກັບການສົ່ງເສີມທຸລະກິດຂອງແມ່ຍິງ.

ຫົວຂໍ້:
- ຫົວໜ່ວຍສະໜອງດ້ານການເງິນ
- ການພັດທະນາດ້ານຊັບພະຍາກອນມະນຸດ
- ການເຂົ້າເຖິງຕະຫລາດ ແລະ ການເຊື່ອມໂຍງກັບສາກົນ
- ນະໂຍບາຍ ແລະ ລະບຽບການ
- ການຜະລິດ, ເຕັກໂນໂລຢີ ແລະ ນະວັດຕະກໍາ

## ການຈັດງານຕ່າງໆ:
### ບັນດາກິດຈະກໍາງານທີ່ກ່ຽວກັບການເຊື່ອມຕໍ່ອາຊຽນ ASEAN SMEs

**ໃນພາກຫົວຂໍ້ ການຈັດງານຂອງເວບໄຊເຮົາ ແມ່ນກໍານົດວັນເວລາ ກ່ຽວກັບ ການຈັດງານທີ່ກ່ຽວຂ້ອງກັບທຸລະກິດ ໃນພາກພື້ນ**

ເຊິ່ງໃນນີ້ຈະລວມຂໍ້ມູນ, ກອງປະຊຸມ, ການເຝິກອົບຮົມ ແລະ ງານສໍາມະນາ ທີ່ລ່າສຸດເພື່ອຈະຊ່ວຍໃຫ້ທ່ານ ພັດທະນາ ແລະ ຂະໜຍາຍທຸລະກິດຂອງທ່ານ. ຖ້າທ່ານບໍສາມາດເຂົ້າຮ່ວມງານເຫຼົ່ານີ້ໄດ້, ທ່ານກໍ່ຍັງພົບເຫັນເອກະສານທີ່ກ່ຽວຂ້ອງຢູ່ໃນເວັບໄຊ ຂອງສະຖາບັນໄດ້ເຊັ່ນ ວາລະງານ, ບົດນໍາສະເໜີ ແລະ ວິດີໂອ.



# ການເລີ້ມຕົ້ນຫຼັກສູດການຮຽນ.

ສາມາດເລີ່ມຕົ້ນໄດ້ທຸກເວລາ, ອີງຕາມຄວາມສະດວກຂອງທ່ານ ແລະ ບໍ່ມີຄ່າໃຊ້ຈ່າຍໃດໆ

**www.asean-sme-academy.org**




ປະເພດຫຼັກສູດຮຽນ
ທີ່ມີຢູ່




**1 ການລົງທະບຽນ:**
ທ່ານສາມາດເລີ່ມຮຽນໄດ້ດ້ວຍຕົວເອງ ໂດຍການລົງທະບຽນຢູ່ເວັບໄຊ. ຂັ້ນຕອນນີແມ່ນໄວ ແລະ ບໍ່ຈໍາເປັນຕ້ອງມີອີເມວ.

ພາຍຫຼັງລົງທະບຽນແລ້ວ ທ່ານກໍ່ສາມາດເລີ່ມຮຽນໄດ້ເລີຍ.

**2** ພາຍໃຕ້ຫົວຂໍ້ຫຼັກສູດຂອງວິຊາຮຽນແຕ່ລະອັນ ແມ່ນຈະມີຄໍາອະທິບາຍໂດຍສັງລວມ, ທັງເນື້ອໃນທີ່ຈະບອກທ່ານວ່າທ່ານຈະມີຜົນ ປະໂຫຍດຫຍັງແດ່ຈາກ ຫຼັກສູດ ໃຫ້ແກ່ທຸລະກິດຂອງທ່ານ.

**ເລືອກຫຼັກສູດ ການຝຶກອົບຮົມ ແລະ ຫຼັກສູດຮຽນທີ່ທ່ານຕ້ອງການ**. ສະມາຊິກທີ່ລົງທະບຽນແລ້ວ ສາມາດເຫັນຫຼັກສູດທັງໝົດ ຢູ່ທາງກ້ອງ ແທັບ ຄໍາວ່າ "ຫຼັກສູດຮຽນ" ຫຼື "TRANING". ທ່ານສາມາດເລືອກຫຼັກສູດຮຽນໄດ້ອີງຕາມ ປະເພດ ແລະ ລະດັບຫຼັກສູດຮຽນ. ນອກຈາກນັ້ນທ່ານສາມາດເຂົ້າເຖິງ ບັນດາປະເພດ ຫຼັກສູດຕ່າງໆຈາກເພສໄດ້.

ຢູ່ພາຍໃຕ້ຂອງຫົວຂໍ້ຫຼັກສູດວິຊາຮຽນ ແຕ່ລະອັນ ແມ່ນຈະມີ ຄໍາອະທິບາຍໂດຍສັງລວມ, ລວມທັງເນື້ອໃນທີ່ຈະບອກທ່ານວ່າ ທ່ານຈະໄດ້ຜົນປະໂຫຍດຫຍັງແດ່ຈາກຫຼັກສູດໃຫ້ແກ່ ທຸລະກິດຂອງທ່ານ







**3** **ເຂົ້າຮຽນຫຼັກສູດ**
ໃນເວລາທີ່ທ່ານຕັດສິນໃຈແລ້ວວ່າຈະເລືອກຮຽນຫຼັກສູດໃດ, ທ່ານສາມາດຄຣິກທີ່ປຸ່ມ: "Take this Course" ຫຼື "ເລີ່ມຮຽນ **ຫລັກສູດນີ້**".




ໃນພາກອະທິບາຍລາຍລະອຽດຂອງຫຼັກສູດ ແມ່ນຈະລວມມີຈໍານວນບົດຮຽນທີ່ຈະມີໃນຫຼັກສູດ.




ບາງຫຼັກສູດຮຽນກໍ່ມີບົດຮຽນສອບເສັງທີ່ຈະວັດລະດັບຄວາມເຂົ້າໃຈຂອງທ່ານ ກ່ຽວກັບເອກະສານຮຽນ ແລະ ທ່ານຕ້ອງໄດ້ເສັງເອົາຄະແນນໃຫ້ຜ່ານເພື່ອສາມາດໄປຮຽນໃນບົດຮຽນຕໍ່ໄປໄດ້





**ໃສ່ເຄື່ອງໝາຍໃນແຕ່ລະຂໍ້:**
ໃນແຕ່ລະບົດຮຽນ, ທ່ານສາມາດເຫັນຄໍາອະທິບາຍໂດຍລວມ ຂອງ ບົດຮຽນທີ່ໄດ້ເລືອກໄວ້.

ໃນເວລາທີ່ທ່ານຮຽນຈົບບົດຮຽນໃດໜຶ່ງແລ້ວ, ຢ່າລືມໄປກົດປຸ່ມ **"Mark Complete"** ຫຼື "ສໍາເລັດ" ເພື່ອໄປຮຽນບົດຕໍ່ໄປ.

ຫຼັກສູດຮຽນທີ່ທ່ານຮຽນສໍາເລັດແລ້ວຈະຖືກໝາຍເປັນສີຂຽວ ເພື່ອໃຫ້ທ່ານຕິດຕາມ ຄວາມກ້າວໜ້າຂອງທ່ານເອງໄດ້






ໃນບາງຫຼັກສູດຮຽນ, ທ່ານຕ້ອງໄດ້ເຂົ້າໄປເວັບໄຊອື່ນ. ກົດ "Enroll" ແລະ ປະຕິບັດຕາມຄໍາແນະນໍາທີ່ຂຽນບອກໄວ້

**4** ເວລາທີ່ສໍາເລັດຫຼັກສູດການຮຽນ ຈະມີໃບຢັ້ງຢືນຜ່ານການຮຽນມອບໃຫ້




**5** **ຕິດຕາມຄວາມຄືບໜ້າຂອງທ່ານ.**
ຢູ່ທາງກ້ອງແທັບ **"My profile"** ຫຼື "ໂປຣໄຟລຂອງຂ້ອຍ" ທ່ານສາມາດພົບເຫັນຫຼັກສູດຮຽນທີ່ທ່ານໄດ້ຮຽນແລ້ວ. ຫຼັກສູດຮຽນທັງຫມົດທີ່ທ່ານໄດ້ຮຽນສໍາເລັດແລ້ວແມ່ນຈະຫມາຍເປັນສີຂຽວ



# ບົດເລື່ອງ ຈາກຜູ່ອຳນວຍຄວາມສະດວກ ແລະ MSMEs ຂອງ The Academy

ຈົນມາຮອດປະຈຸບັນນີ້, ທາງສະຖາບັນໄດ້ຝຶກອົບຮົມພະນັກງານ ຈາກຫົວໜ່ວຍທີ່ສະໜັບສະໜູນ ທຸລະກິດ SME ຫຼາຍກວ່າ **190** ຄົນ ເຊັ່ນ  ສະມາຄົມ ການຄ້າ ແລະ ທຸລະກິດ, ສະຖາບັນການສຶກສາ, ຫົວໜ່ວຍພັດທະນາ ເສດຖະກິດ, ບໍລິສັດເອກະຊົນ ແລະ ຫ້ອງການຂອງລັດຖະບານ ທີ່ສະໜັບສະໜູນ ການພັດທະນາຂອງ **SME ຢູ່ປະເທດ ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ຟີລິບປິນ, ໄທ, ແລະ ຫວຽດນາມ**

ເລື່ອງຕໍ່ໄປນີ້ແມ່ນ ບາງເລື່ອງລາວຂອງພວກເຂົາ



**Winston T. Singun**

ຫົວໜ້າພະແນກຊ່ຽວຊານສະເພາະດ້ານການຄ້າ ແລະ ອຸດສາກຳ (DTI), ຂອງ ຮ້ອງກັນແຂວງ ຄາກາຢານ, ພາກ ພື້ນເຂດ 2,

**ຟີລິປິນ**

...............................

*" ທາງສະຖາບັນ ສາມາດຊ່ວຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການ SMEs. ໃນຫຼັກສູດການຮຽນດັ່ງກ່າວ, ໄດ້ກາຍເປັນຫ້ອງຮຽນ ທີ່ສຳຄັນສຳລັບເຈົ້າຂອງທຸລະກິດ ເພື່ອຍົກສູງທັກສະທຸລະກິດໃຫ້ແກ່ພວກເຂົາ ".*

ໂດຍເປັນຜູ້ປະສານງານຂອງສູນ ໃຫ້ການບໍລິການຄົບວົງຈອນ Negosyo, ນີ້ແມ່ນສ່ວນໜຶ່ງຂອງຄວາມຝັນ ທ່ານ ວິນສັນ ທີ່ຢາກເຫັນ MSMes  ຍົກສູງຄວາມສາມາດຂອງພວກເຂົາ ເພື່ອເຮັດໃຫ້ທຸລະກິດມີຄວາມກ້າວໜ້າ. ໂດຍຫຼັກສູດການຮຽນອອນລາຍທີ່ຫຼາກຫຼາຍທີ່ສາມາດຮຽນດ້ວຍຕົນເອງ ແລະ ເໝາະສົມກັບທຸລະກິດ SMEs ໂດຍສະເພາະ, ວິນສັນເຫັນວ່າ ສະຖາບັນແມ່ນຊ່ອງທາງທີ່ສຳຄັນ ທີ່ຈະເຮັດໃຫ້ຈຸດປະສົງດັ່ງກ່າວປະສົບຜົນສຳເລັດ.

ເພື່ອໃຫ້ສົ່ງເສີມໃຫ້ມີການເຂົ້າເຖິງການນຳໃຊ້ລະບົບ ຂອງສະຖາບັນ, ທ່ານ ວິນສັນ ໄດ້ຊ່ວຍຈັດການຝຶກອົບຮົມໃຫ້ແກ່ຄູຝຶກ ທີ່ເປັນຜູ້ປະສານງານຈາກສູນ Negosyo ແລະ ພະນັກງານການຄ້າ ແລະ ອຸດຫະກຳ ເທດສະບານ ຈາກພາກພື້ນ 2 ຂອງ DTI.

ການຝຶກອົບຮົມ 2 ຄັ້ງທຳອິດແມ່ນສຳລັບ ບັນດາອົງການທີ່ໃຫ້ການສະໜັບສະໜູນຜູ້ປະກອບການ ທີ່ເປັນແມ່ຍິງ, ພ້ອມດ້ວຍຜູ້ເຂົ້າຮ່ວມຈາກ ໂຄງການທີ່ຊ່ວຍເຫຼືອດ້ານການເປັນຢູ່ ແລະ ສະມາຄົມ   OFW Pavvurulunan ເຊິ່ງເປັນສະມາຄົມຂອງ ອາດີດແຮງງານທີ່ຜ່ານ ການເຮັດວຽກຢູ່ຕ່າງປະເທດ.



ກອງປະຊຸມໃນເດືອນ ກຸມພາ 2017 ແມ່ນມີທີ່ປຶກສາດ້ານທຸລະກິດເຂົ້າຮ່ວມທັງໝົດ 52 ທ່ານ ແລະ ຄູຝຶກ SME ທີ່ເປັນຕົວແທນໃຫ້ 5 ແຂວງຂອງພາກພື້ນ Cagayan. ພາຍໃນເວລາ 2 ວັນ, ຜູ້ເຂົ້າຮ່ວມໄດ້ແລກປ່ຽນ ປະສົບການ ພ້ອມດ້ວຍສິ່ງທ້າທາຍ ໃນການສົ່ງເສີມ SMEs ແລະ ຮຽນຮູ້ວິທີນໍາໃຊ້ ສະຖາບັນ.

ເພື່ອເພີ່ມທະວີຜົນໄດ້ຮັບຂອງການຝຶກອົບຮົມ, ຜູ້ເຂົ້າຮ່ວມໄດ້ສະແດງຄວາມຕັ້ງໃຈ ທີ່ຈະ ສະໜອງຂໍ້ມູນຂອງ MSMEs ຮ່ວມກັບເຄືອຂ່າຍຂອງພວກເຂົາເອງ. ນອກຈາກນັ້ນ ຜູ້ເຂົ້າຮ່ວມຍັງເຫັນວ່າ ຫຼັກສູດຮຽນອື່ນໆ ກໍ່ແມ່ນຫຼັກສູດທີ່ສ້າງແຮງບັນດານໃຈໃນການຝຶກອົບຮົມຜູ້ປະກອບ ເຊິ່ງເປັນສ່ວນໜຶ່ງຂອງ ເຄື່ອງມືການພັດທະນາວິສາຫະກິດ ຂັ້ນ ຊຸມຊົນ ທີ່ສ້າງຂຶ້ນ ເຊິ່ງເປັນຫຼັກສູດທີ່ມີປະໂຫຍດ ໂດຍສະເພາະໃຫ້ແກ່ວິສາຫະກິດ.

ວິນສັນ ເຫັນວ່າການສອນຫຼັກສູດກ່ຽວກັບການປະກອບທຸລະກິດ ນີ້ແມ່ນເໝາະສົມ ສໍາລັບທຸລະກິດ ແລະ ຜູ້ປະກອບການ ຂັ້ນພື້ນຖານໃນຂະແໜງການທີ່ບໍ່ເປັນທາງການ. ນອກຈາກນັ້ນ, ທ່ານ ຍັງແນະນໍາໃຫ້ຮຽນຮູ້ຫຼັກສູດ ການຝຶກອົບຮົມການເປັນເຈົ້າຂອງທຸລະກິດ ສໍາລັບຜູ້ປະກອບການທີ່ໄດ້ດໍາເນີນທຸລະກິດ ແຕ່ຍັງມີຄວາມຫຍຸ້ງຍາກ.





**Genoveva G. Ancheta (Eva)**

ຊ່ຽວຊານຂັ້ນສູງດ້ານ ການພັດທະນາການຄ້າ ແລະ ອຸດຫະກໍາ, ສູນຝຶກອົບຮົບການຄ້າຟີລິບປິນ (PTTC)

**ຟີລິບປິນ**

*"ໂດຍອີງໃສ່ ຫ້ອງການບໍລິການໃຫ້ຄໍາປຶກສາດ້ານທຸລະກິດທີ່ພວກເຮົາຫາກໍພັດທະນາເພື່ອ ທຸລະກິດ ລິເລີ່ມໃໝ່ ຂ້າພະເຈົ້າ ຄິດວ່າ ທາງສະຖາບັນ ສາມາດ ຊ່ວຍໃຫ້ສູນພວກເຮົາມີຄວາມສົມບູນ ຂຶ້ນ ໂດຍການມີຫຼາກຫຼາຍລັກສະນະ ແລະ ຂໍ້ມູນທີ່ສາມາດຊ່ວຍ MSMEs ໃນການດໍາເນີນງານ ຫຼື ຍົກສູງທຸລະກິດພວກເຂົາໃຫ້ກ້າວຫນ້າ".*

ທ່ານນາງ ອີວາ ( Eva ) ມີປະສົບການຫຼາຍປີເຮັດວຽກຮ່ວມກັບ SMEs ຢູ່ໃນຟີລິບປິນ. ໂດຍການເຮັດວຽກຢູ່ທີ່ PTTC ລາວໄດ້ຊ່ວຍ ຜູ້ປະກອບການເຕີບໂຕ ແລະ ພັດທະນາທຸລະກິດພວກເຂົາ ໂດຍໃຫ້ສາມາດເຂົ້າເຖິງ ບັນດາຫຼັກສູດການຝຶກອົບຮົບທີ່ຫຼາກຫຼາຍຂອງ PTTC, ບໍລິການເພື່ອພັດທະນາທຸລະກິດ, ງານເທດການ ແລະ ກອງປະຊຸມດ້ານ ການຄ້າ.

ໂດຍອີງໃສ່ສະພາບການນໍາໃຊ້ອິນເຕີເນັດຢ່າງກວ້າງຂວາງ ແລະ ວິວັດທະນາການຂອງເທັກໂນໂລຢີ, ທ່ານນາງ Eva ເນັ້ນໜັກວຽກຂອງລາວ ສ່ວນໃຫຍ່ໃສ່ການປັບປຸງຄວາມສາມາດຂອງ SME ໃຫ້ສາມາດນໍາໃຊ້ ການຄ້າເອເລັກໂທຣນິກ (e-commerce). ສໍາລັບ Eva ຫຼັກສູດຮຽນຂອງ Academy ທີ່ເນັ້ນໜັກໃສ່ e-commerce ແມ່ນອົງກອນປະກອບທີ່ເໝາະສົມທີ່ສຸດເຊິ່ງເຂົ້າກັບຈຸດປະສົງໂດຍລວມ ຂອງ ຫຼັກສູດ ການຝຶກອົບຮົມຂອງ ລາວເອງ

ໃນເດືອນ ທັນວາ 2016, PTTC ໄດ້ຈັດຝຶກອົບຮົມໃຫ້ແກ່ຄູຝຶກ ໂດຍ ສຸມໃສ່ຫົວຂໍ້ການສ້າງວິທີໃຫ້ແມ່ຍິງມີຄວາມສາມາດ ໃນການນໍາໃຊ້ e-commerce ຢ່າງມີປະສິດຕິພາບ. E-commerce ຊ່ວຍສະໜອງ ຜົນປະໂຫຍດ ສໍາຄັນໃຫ້ແກ່ແມ່ຍິງ ຍ້ອນມີຕົ້ນທຶນຕໍ່າ ແລະ ຄ່າຕິດຕັ້ງ ທີ່ເໝາະສົມ ແລະ ສາມາດເຮັດໃຫ້ແມ່ຍິງມີສິດໃນການບໍລິຫານເວລາແບບ ຍືດຢຸ່ນໄດ້ ທຽບໃສ່ ທຸລະ ກິດແບບທົ່ວໄປ.






ໃນຫຼັກສູດຮຽນດັ່ງກ່າວ, ມີແມ່ຍິງ 15 ຄົນ ໄດ້ຮັບການຝຶກອົບຮົມ ກ່ຽວກັບພື້ນຖານ e-commerec ເພື່ອນຳເອົາທຸລະກິດ ຂອງ ພວກເຂົາໄປຢູ່ອອນລາຍ. ຫຼັກສູດຍັງລວມມີການຈັດການຝຶກອົບຮົມທີ່ມີ ພາກປະຕິບັດຕົວຈິງ ໂດຍມີຊ່ຽວຊານ ດ້ານ e-commerec ໂດຍນຳໃຊ້ Facebook Fan page ແລະ google ເຊິ່ງເປັນຊ່ອງທາງທີ່ງ່າຍດາຍ ສຳລັບ MSMEs ເພື່ອເຮັດໃຫ້ພວກເຂົາ ສາມາດມີຕົວຕົນຢູ່ອອນລາຍໄດ້. ໃນມື້ຕໍ່ມາ, ບັນດານັກສຳ ມະນາກອນເຫຼົ່ານີ້ສາມາດເຂົ້າເຖິງ ບົດຮຽນຈາກ ຫຼັກສູດຮຽນອື່ນໆຢູ່ອອນ ລາຍ, ລວມທາງບົດຮຽນຂອງທາງສະຖາບັນ ດ້ານ ການຂາຍອອນລາຍ, ການຕະຫລາດ ໃນສື່ສັງຄົມ ແລະ ການສ້າງຄວາມເຂັ້ມແຂງການມີຕົວຕົນໃນທົ່ວໂລກໂດຍຜ່ານການຕະຫຼາດທາງອອນລາຍ. ໃນທີ່ສຸດ, ບັນດານັກສຳມະນາກອນກໍ່ໄດ້ມີໂອກາດ ສົນທະນາກ່ຽວກັບສິ່ງທ້າທາຍຂອງການເລີ່ມສ້າງທຸລະກິດ ກັບ ຊ່ຽວຊານດ້ານ e-commerec.

ໂດຍລວມແລ້ວ, ຫຼັກສູດ ໄດ້ສັງລວມເອົາ ຫົວຂໍ້ຕ່າງໆເຊັ່ນ: ພື້ນຖານ e-commerec ແລະການຕະຫຼາດດີຈິຕອນ ສຳລັບ SMEs, ໃນຂະນະດຽວກັນ ກໍ່ຍັງໄດ້ສະໜອງທັກສະດ້ານ ICT ຂັ້ນພື້ນຖານ ໃຫ້ນັກສຳມະນາກອນ ເພື່ອໃຫ້ພວກເ ຂົາສາມາດຮຽນຮູ້ຜົນ ປະໂຫຍດທີ່ຈະໄດ້ຮັບຈາກ e-commerec ໄດ້ດ້ວຍຕົວເອງ. ຫຼັງຈາກນັ້ນ ກໍ່ຈະມີການ ຕິດຕາມຄືນໂດຍທີ່ PTTC ຈະສືບຕໍ່ເຊື່ອມຕໍ່ ນັກສຳມະນາກອນ ກັບບັນດາສະຖາບັນທີ່ສາມາດສະໜອງ ຄວາມຊ່ວຍເຫຼືອໃຫ້ແກ່ພວກເຂົາໄດ້ໃນຕໍ່ໄປເຊັ່ນ: ເຄື່ອງອຸປະກອນ ຄອມພິວເຕີ ແລະ ເງິນທຶນ.



**Socheata Touch**

ຜູ້ຈັດການ Inspired ແລະຮອງປະທານ ສະມາຄົມສ້າງຄວາມສາມາດ ໃຫ້ແກ່ຜູ້ປະກອບການຍິງ ຂອງກຳປູເຈຍ( CWEA )

**ກຳປູເຈຍ**

*“ຂ້າພະເຈົ້າເຊື່ອວ່າ Academy ສະໜອງຄວາມຕ້ອງການໃຫ້ແກ່ຜູ້ປະກອບການ. Academy ສາມາເຮັດໃຫ້ພວກເຂົາມີຄວາມຮູ້ທີ່ກ້ວາງຂວາງຂຶ້ນ ແລະ ມີທັກສະໃນການກະຕຸກຊຸກຍູ້ທຸລະກິດຂອງພວກເຂົາ ແລະ ຊ່ວຍໃຫ້ພວກເຂົາ ສ້າງເຄືອຂ່າຍກັບຫຼາຍຂະແໜງການ ແລະ ກັບຫຼາຍປະເທດ ໃນພາກພື້ນ.”*

ສະມາຄົມສັງຄົມສ້າງສາມາດໃຫ້ແກ່ຜູ້ປະກອບການຍິງ ຂອງກຳປູເຈຍ (CWEA) ແມ່ນການລິເລີ່ມຂອງ ລັດຖະມົນຕີ ກະຊວງວຽກງານແມ່ຍິງ ໃນກະປູເຈຍ, ເຊິ່ງ ມີເປົ້າໝາຍເພື່ອສົ່ງເສີມ ແລະ ໃຫ້ການສະໜັບໜູນການເຕີບໃຫ່ຍຂະຫຍາຍຕົວຂອງ ທຸລະກິດທີ່ມີເຈົ້າຂອງເປັນແມ່ຍິງ ພາຍໃນປະເທດ. ເພື່ອຊ່ວຍຍິງສາມາດເລີ່ມ ແລະ ຂະຫຍາຍທຸລະກິດຂອງພວກເຂົາ, (CWEA) ໄດ້ສົ່ງໃຫ້ ໂສສີຕາ (Socheata) ເຂົ້າຮຽນໃນຫຼາຍຫຼັກສູດຂອງ Academy ເຊິ່ງເປັນສ່ວນໜຶ່ງຂອງໂຄງການຝຶກອົບຮົມຂອງ CWEA ສຳລັບຜູ້ປະກອບການຍິງ.

ຕັ້ງແຕ່ໄດ້ເຝິກອົບຮົມໃນປີ 2016, (Socheata )ໄດ້ແລກປ່ຽນຄວາມຮູ້ ທີ່ນາງໄດ້ຮຽນຮູ້ກັບ 3 ກຸ່ມໃຫຍ່ຄື: ແລກປ່ຽນກັບສະມາຊິກຂອງ CWEA ໃນພະນົມເປັນ 20 ຄົນ, ແລກປ່ຽນກັບ ຜູ້ປະກອບການຍິງ ຢູ່ ຊຽງລຽບ 25, ຄົນ, ແລະ ກັບນັກສຶກສາຢູ່ມະຫາວິທະຍາໄລ ສາຂາ ການບໍລິຫານທຸລະກິດ





ທີ່ຢູ່ ພະນົມເປັນ 15 ຄົນ. ພູທີ່ນາງໄດ້ແລກປ່ຽນຄວາມຮູ້ນຳ ສ່ວນໃຫຍ່ແມ່ນ ຜູ້ປະກອບການທຸລະກິດຍິງ ຂັ້ນຕອນການບໍລິການຸຈຸລະພາກ. ຫຼັກສູດການຮຽນທີ່ນາງມັກທີ່ສຸດແມ່ນ ການຕະຫຼາດໃນສື່ສັງຄົມ ຍ້ອນວ່າວິຊາດັ່ງກ່າວແມ່ນຈະຊ່ວຍໃຫ້ນັກສຳມະນາກອນ ສາມາດນຳໃຊ້ໂດຍກົງ ໃນຊີວິດປະຈຳວັນຂອງການດຳເນີນທຸລະກິດ.

ນອກຈາກນັ້ນ ໃນເວລານຳສະເໜີບົດຮຽນຂອງ Academy, socheata ໄດ້ເຮັດກິດຈະກຳລະດົມຄວາມຄິດ ແລະ ສົນທະນາ ໃນເວລານາງ ຈັດການຝຶກອົບຮົມ. ນາງຈະໃຫ້ນັກສຳມະນາກອນ ແລກປ່ຽນປະສົບການ ແລະ ສິ່ງທ້າທາຍ ທີ່ພວກເຂົາພົບພໍ້ ໃນ ຖານະທີ່ເປັນຜູ້ປະກອບການ ເພື່ອໃຫ້ເຂົາຮຽນຮູ້ຈາກກັນ ແລະ ກັນ. ຫຼັງຈາກນັ້ນ, ນາງກໍຈະນຳພາການສົນທະນາ ໂດຍນຳໃຊ້ ທັກສະ ແລະ ຄວາມຮູ້ທີ່ມີຢູ່ ໃນຖານະເປັນທີ່ປຶກສາດ້ານທຸກິດ ແລະ ຄູຝຶກ.

ສຳລັບ Socheata, Academy ແມ່ນເຄື່ອງມື ທີ່ສຳຄັນນສຳລັບການປັບປຸງ ຄວາມສາມາດຂອງ MSMEs, ເຊິ່ງແມ່ນໃຈຄວາມສຳຄັນ ຂອງ ການສົນທະນາກັບນັກສຳມະນາກອນ. ຕົວຢ່າງເຊັ່ນ: ນັກທຸລະກິດຍິງ ຢູ່ຊຽງລຽບ ໄດ້ບອກກັບ Socheata ວ່າລາວໄດ້ນຳໃຊ້ Facebook ເພື່ອເພີ່ມຍອດຂາຍຂອງທຸລະກິດຂອງລາວ.



**Sharon C. Soriano**

ປະທານສະມາຄົມແຮງງານຟີລິບປິນ ທີ່ເຮັດວຽກ ຢູ່ຕ່າງປະເທດຂອງ Pavvurulunan (OFW)

**ຟີລິບປິນ**

*“ ຫຼັກສູດການເຝິກອົບຮົມແມ່ນມີປະໂຫຍດຫຼາຍ. ເຈົ້າຢາກສະໝັກຮຽນຫຼັກສູດອື່ນອີກ ເພາະວ່າ ພວກມັນຊ່ວຍຂ້ອຍໃນການດຳເນີນທຸລະກິດ ”*

ທ່ານນາງ ຊາລອນ ແມ່ນໜຶ່ງໃນນັກສຳມະນາກອນ ໃນງານຝຶກອົບຮົມ ທີ່ຈັດໂດຍພະແນກການຄ້າ ແລະ ອຸດສາຫະກຳ (DTI ), ຫ້ອງປົກຄອງແຂວງຄາກາຢານ ( Cagayan ), ພາກພື້ນ 2. ງານຝຶກອົບຮົມດັ່ງກ່າວແມ່ນຖືເອົາການຝຶກອົບຮົມຜູ້ປະກອບການໃຫ້ມີ ແຮງບັນດານໃຈ ເປັນຫຼັກ, ເຊິ່ງນັກສຳມະນາກອນ ໄດ້ສຸມໃສ່ການສ້າງຄວາມສາມາດຂັ້ນ ພື້ນຖານໃນ ການເລີ່ມເປີດທຸລະກິດ, ເຊັ່ນ ຫຼັກການທຸລະກິດຂັ້ນພື້ນຖານ ສຳລັບ ຜະລິດ ຕະພັນ, ສະຖານທີ່, ການສົ່ງເສີມການຂາຍ ແລະ ລາຄາ, ການປະເມີນ ຄວາມຄິດດ້ານທຸລະກິດ, ແລະ ການສ້າງຍຸດທະສາດໃນການພັດທະນາທຸລະກິດ.

ໂດຍມີຜູ້ເຂົ້າຮ່ວມອີກ 50 ຄົນ ທີ່ເຄີຍເປັນແຮງງານຢູ່ຕ່າງປະເທດມາກ່ອນ, ທ່ານ ນາງ ຊາລອນ ໄດ້ຮຽນຮູ້ວິທີເລີ່ມທຸລະກິດຊີ້ນແປຮູບ ແລະ ທຸລະກິດອົບເຂົ້າຈີ່-ເຂົ້າໜົມ. ພວກເຂົາໄດ້ຮຽນຮູ້ໄປເທື່ອລະຂັ້ນຕອນຂອງການເລີ່ມຕົ້ນດຳເນີນທຸລະກິດ, ສ້າງທຸລະກິດ ແລະ ສົ່ງເສີມການຂາຍໃຫ້ແກ່ສິນຄ້າພວກເຂົາ. ຍ້ອນວ່າ ຫຼັກສູດການຝຶກອົບຮົມແມ່ນສະແດງໃຫ້ເຫັນການປະຕິບັດຕົວຈິງໄດ້, ນາງ ຈຶ່ງເຂົ້າໃຈຫຼັກສູດໄດ້ງ່າຍ ແລະ ສາມາດເລີ່ມດຳເນີນທຸລະກິດໄດ້ທັນທີ.

ພາຍຫຼັງການຝຶກອົບຮົມ, ທ່ານ ຊາລອນ ແລະ ນັກສຳມະນາກອນຄົນອື່ ໄດ້ຮັບເງິນທຶນ 10.000 Pso ຈາກທຶນໂຄງການ ທີ່ມີຈຸດປະສົງຊ່ວຍສົ່ງເສີມໃຫ້ແຮງງານທີ່ກັບຄືນປະເທດ ສາມາດເລີ່ມດຳເນີນທຸລະກິດ. DTI ແລະ ສູນ Negosyo ກໍ່ໄດ້ຊ່ວຍໃຫ້ພວກເຂົາເຂົ້າໃຈເຖິງ ເງິນທຶນນີ້ໄດ້ ໂດຍການກະກຽມ ບົດສະເໜີໂຄງການ ແລະ ໄດ້ໃຫ້ການອຳນວຍຄວາມສະດວກໃນແຕ່ລະຂັ້ນຕອນ. ທ່ານ ນາງ ຊາລອນ ໄດ້ນຳໃຊ້ເງິນທຶນທີ່ຊ່ວຍເຫຼືອດັ່ງກ່າວ ເປັນຕົ້ນທຶນຕົນ ໃນການ ເລີ່ມດຳເນີນທຸລະກິດ ຊີ້ນແປຮູບ.



**Jesusa M. Abear (Jesse)**

ຊ່ຽວຊານຂັ້ນສູງ ດ້ານການພັດທະນາການຄ້າ ແລະ ອຸດສາຫະກຳ ຂອງ DTI-ພາກພື້ນ 10, ຫ້ອງການປົກຄອງແຂວງ ມິນດານາວ ເໜືອ (Northern mindanao)

**ຟີລິບປິນ**

*" Academy ໃຫ້ໂອກາດຜູ້ປະກອບການໄດ້ຮຽນຮູ້ດ້ວຍຕົວພວກເຂົາເອງ ແລະ ໃນເວລາທີ່ພວກເຂົາສະດວກ. ຕາຕະລາງຮຽນແມ່ນມີຄວາມຍືດຍຸ່ນ ເຊິ່ງເໝາະສົມໃຫ້ພວກເຂົາຈັດສັນເວລາຮຽນ ແລະ ດຳເນີນທຸລະກິດໄປພ້ອມ."*

ໃນສະຖານະເປັນຜູ້ປະສານງານຂັ້ນແຂວງໃຫ້ແກ່ສູນ Negosyo ທ່ານນາງ ເຈັດສ ແມ່ນຕ້ອງໄດ້ຊອກຫາເຄື່ອງມື ແລະ ວິທີການຍົກສູງຄວາມສາມາດຂອງ MSMEs. ໃນພາກພື້ນ. ບາງການບໍລິການ ຂອງລາວມີ: ຂໍ້ມູນກ່ຽວກັບທຸລະກິດ, ແລະ ການສະໜັບ ສະໜຸນໃນການແກ້ໃຂບັນຫາໃນເວລາລົງທະບຽນ ແລະ ວຽກບໍລິຫານ. ນອກນັ້ນ, ລາວຍັງເປັນຜູ້ປະສານງານການເຝິກອົບຮົມ ດ້ານທຸລະກິດຕ່າງໆ ທີ່ກ່ຽວຂ້ອງກັບການປະກອບທຸລະກິດ.

ທ່ານ ນາງ ເຈັດສ ເຫັນວ່າ Academy ມີປະໂຫຍດຫຼາຍ ແລະ ຊ່ວຍສົ່ງເສີມ MSMEs. ໃນເດືອນ ມີນາ 2017, ທ່ານ ນາງ ເຈັດສ ໄດ້ຝຶກອົບຮົບຜູ້ປະກອບການ ທຸລະກິດ 15 ຄົນ ໂດຍມີເນື້ອໃນປະເພດທຸລະກິດ ທີ່ແຕກຕ່າງກັນ ຕັ້ງແຕ່ຂະໜາດບໍລິການ ແລະ ອຸດສາຫະກຳອາຫານ ໃຫ້ສາມາດເຂົ້າເຖິງຫຼັກສູດຮຽນ ໃນ Academy.

ຫຼັກສູດ e-commerce ແມ່ນໜຶ່ງໃນວິຊາຮຽນທີ່ ນາງມັກ ຍ້ອນວ່າຜູ້ ເຂົ້າຮຽນສາມາດຮຽນຮູ້ວິທີ ນຳໃຊ້ ສື່ສັງຄົມ ເພື່ອໂຄສະນາສິນຄ້າຂອງພວກເຂົາ. ໃນເວລາການຝຶກອົບຮົບ, ທ່ານ ນາງ ເຈັດສ ໄດ້ແນະນຳໃຫ້ຜູ້ເຂົ້າຮ່ວມນຳໃຊ້ ຫຼັກສູດຮຽນ ເຂົ້າໃນການເລີ່ມຂາຍສິນຄ້າຂອງພວກເຂົາຕົວຈິງ ຢູ່ໃນ Facebook ເພາະວ່າສື່ດັ່ງກ່າວແມ່ນ ຟຣີອ ແລະ ມີຕົວເລືອກທີ່ມີປະໂຫຍດຫຼາຍຢ່າງ. ມີສິ່ງທ້າທາຍທີ່ນາງໄດ້ພົບພໍກໍ່ຄື ການເຊື່ອມຕໍ່ອິນເຕີເນັດແມ່ນຊ້າ ເຊິ່ງມັນເປັນອຸປະສັກໃຫ້ແກ່ການດຳເນີນການຝຶກອົບຮົມ.





**Ly Huy**

ອຳນວຍການ ບໍລິສັດກໍ່ສ້າງ ແລະ ຕົບແຕ່ງພາຍໃນ SARW ແລະ ເປັນອຳນວຍການປະຈຳປະເທດ ຂອງໂຄງການ One-2-One ກຳປູເຈ້ຍ

**ກຳປູເຈ້ຍ**

*" ຂ້າພະເຈົ້າດີໃຈທີ່ພວກເຮົາສາມາດເລືອກວິຊາຮຽນ ໃນ Academy, ເຊິ່ງມັນເຮັດໃຫ້ສາເຮົາມາດເລືອກຮຽນວິຊາທີ່ກ່ຽວຂ້ອງໄດ້."*

ຕັ້ງແຕ່ໄດ້ຜ່ານການຝຶກອົບຮົມ ກ່ຽວກັບວິທີເຂົ້າຮຽນ ແລະ ນຳໃຊ້ Academy ໃນເດືອນຈິກ 2016, ທ່ານ ລີ ຫຸຍ ໄດ້ແລກປ່ຽນຄວາມຮູ້ ກັບເຄືອຂ່າຍຂອງລາວ. ທ່ານ ລີ ຫຸຍ ແມ່ນຫົວໜ້າ ຂອງບໍລິສັດກໍ່ສ້າງ SARW ແລະ ເປັນປະທານ ຂອງ one-2-one, ຊຶ່ງມູນລະນິທິ ທີ່ຊ່ວຍເຫຼືອ ນັກຮຽນໜຸ່ມຜູ້ດ້ອຍໂອກາດໃນກຳປູເຈຍ ຜູ້ທີຕ້ອງການເຂົາຮຽນໃນລະດັບມະຫາວິທະຍາໄລ.

ທ່ານ ລີ ຫຸຍ ມີຄວາມຕື່ນເຕັ່ນ ກັບທາງເລືອກທີ່ມີຢູ່ໃນ Academy ທີ່ເຮັດໃຫ້ລາວສາມາດ ຊອກຫາວິຊາຮຽນເພາະໄດ້ ເພື່ອ ພັດທະນາທຸລະກິດໃຫ້ເໝາະ ສົມກັບຄວາມຕ້ອງການຂອງລາວ. ໂດຍການເຮັດແນວນັ້ນ, ລາວສາມາດເຂົ້າເຖິງຫຼັກສູດຮຽນສະເພາະ ແລະ ສາມາດຮຽນເນື້ອໃນຂອງແຕ່ລະຫຼັກສູດ ວິຊາຮຽນ ອີງຕາມເວລາທີລາວມີ .

ທ່ານ Ly Huy ຍັງເຊື່ອວ່າບັນດາຫຼັກສູດຮຽນ ຂອງ Academy ສາມາດຊ່ວຍນັກຮຽນຂອງ One-2-One ໃຫ້ສາມາດກະກຽມຄວາມພ້ອມ ເພື່ອເລີ້ມຕົ້ນ ປະກອບທຸລະກິດຂັ້ນຈຸລະພາກໂດຍສະເພາະແມ່ນດ້ານ ທັນຕະແພດ ແລະ ການບໍລິການດ້ານ ສາທາລະນະສຸກ ພາຍຫຼັງຈົບ ການສຶກສາ. ເພື່ອພິສູດວ່າ ຄວາມເຊື່ອຂອງລາວເປັນຈິງໄດ້, ລາວໄດ້ຝຶກອົບຮົມນັກສຶກສາ 20 ຄົນ ເພື່ອໃຫ້ຮູ້ຈັກນຳໃຊ້ Academy.

ໃນຖານະເປັນຜູ້ອຳນວຍການຂອງບໍລິສັດ SAEW, ທຸລະກິດກໍ່ສ້າງ ແລະ ຕົກແຕ່ງພາຍໃນ, ລາວໄດ້ແນະນຳໃຫ້ຜູ້ຈັດການ ຂອງບໍລິສັດເຂົ້າໄປຮຽນບັນດາຫຼັກສູດດ້ານ ການຕະຫລາດ, ການວາງແຜນທຸລະກິດ ຢູ່ອອນລາຍ ແລະ ການໄດ້ຮັບຜົນປະໂຫຍດຈາກ ສື່ສັງຄົມ.

ພາຍຫຼັງຈົບຫຼັກສູດ ຍົກສູງລະດັບທຸລະກິດຂອງທ່ານໂດຍຜ່ານ Facebook ( Boost Your Business With Facebook ), ປັດຈຸບັນທີມຂອງລາວໄດ້ດຳເນີນທຸລະກິດໂດຍ ຜ່ານການຕະຫລາດທາງສື່ສັງຄົມຢ່າງມີປະສິດທິພາບຫລາຍຂຶ້ນ ໂດຍໄດ້ມີການນຳໃຊ້ບັນດາເຄື່ອງມື Facebook ເພື່ອເໃຫ້ຮັດພວກເຂົາຂະ ຫຍາຍເປົ້າໝາຍຕະຫຼາດກວ້າງອອກ.

ນອກຈາກນັ້ນ, ພະແນກບໍລິຫານບຸກຄະລາກອນ ຂອງ ບໍລິສັດ ກໍໄດ້ແນະນຳໃຫ້ພະນັກງານ ຮຽນຫຼັກສູດອອນລາຍ ເພື່ອສືບຕໍ່ພັດທະນາ ທັກສະພວກເຂົາ. ໃນໄລຍະບໍ່ດົນຜ່ານມານີ້, ພະນັກງານໄດ້ແນະນຳໃຫ້ ຮຽນຫຼັກສູດ ຢູ່ Academy ກ່ຽວກັບ ການບໍລິຫານສິນຄ້າໃນສາງ ແລະ ກະແສເງິນສົດ.




**Masyhur**

ສູນໃຫ້ບໍລິການດ້ານທຸລະກິດ ແບບປະສົມປະສານ (PLUT) ທີ່ປຶກສາ ດ້ານໄອທີ ສໍາລັບສະຫະກອນ West N usa Tenggara ແລະ ວິສະຫະກິດ ຈຸລະພາກ, ຂະໜາດນ້ອຍ ແລະ ກາງ ( KUMKM )

**ອິນໂດເນເຊຍ**

*" ເຄື່ອງໝາຍທີ່ສະແດງໃຫ້ເຫັນ ຄວາມຄືບ ໜ້າຂອງຫຼັກສູດຮຽນ ແມ່ນດີຫຼາຍ ຍ້ອນວ່າທຸກໆຄັ້ງ ທີ່ພວກເຮົາຮຽນຈົບຫຼັກສູດໃດ ໜຶ່ງແລ້ວ ຈະໝາຍເຄື່ອງໝາຍ ຖືກ ສີຂຽວ ສະແດງຂຶ້ນເພື່ອ ບອກວ່າເຮົາ ໄດ້ຮຽນຈົບຫຼັກສູດ ແລ້ວ. ນອກນັ້ນ, ເນື້ອໃນ ຂອງ Academy ແມ່ນດີຫຼາຍ!,ມັນ ບໍ່ຄ່ອຍຈະມີໂອກາດຫຼາຍທີ່ບາງ ບໍລິສັດຕ່າງໆ ຈະສະໜອງ ຂໍ້ມູນ ຫຼັກສູດຫຼາຍແບບນັ້ນໃຫ້."*

ຍ້ອນວ່າ ທ່ານ Masyhur ມີພື້ນຖານ ໄອທີ, ແລະ ລາວກໍ່ຕ້ອງການຢາກຊ່ວຍ ຫົວໜ່ວຍທຸລະກິດນ້ອຍ ໃນ ແຂວງ ລົມບົກ (Lombok) ໃຫ້ກາຍເປັນຜູ້ທີ່ສາມາດນໍາໃຊ້ເທັກໂນໂລຊີເຂົ້າໃນ ການແກ້ໄຂບັນຫາດ້ານການເງິນທີ່ພວກເຂົາພົບເຫັນ. ໃນເວລາ ລາວເຂົ້າຮ່ວມໃນການຝຶກອົບຮົມ ຜູ້ອໍານວຍຄວາມສະດວກ (TOF) ກ່ຽວກັບ Academy ຢູ່ທີ່ ຈັກກາຕາ ເດືອນ ຕຸລາ 2016, ທ່ານ Masyhur ໄດ້ຮ່ວມເຮັດວຽກກັບ Sentra UKM, ສູນໃຫ້ການບໍລິການ ດ້ານທຸລະກິດ ແບບປະສົມປະສານ (ຫຼື PLUT), ເຊິ່ງເປັນໂຄງການຂອງ ກະຊວງ ສະຫະກອນ ແລະ ທຸລະກິດຂະໜາດນ້ອຍ ທີ່ສະໜອງ ການບໍລິ ການທຸລະກິດແບບປະສົມປະສານ ໂດຍທີ່ບໍ່ຄິດຄ່າ ບໍລິການ ໃຫ້ແກ່ ວິສາຫະກິດ ຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ (MSMEs) ແລະ ຊ່ວຍໃຫ້ພວກເຂົາດໍາເນີນການຕະຫຼາດ ໃຫ້ມີປະສິດທິພາບ ເພື່ອເພີ່ມກໍາລັງການຜະລິດ ແລະ ປັບປຸງ ການເຂົ້າເຖິງການເງິນ.

ທ່ານ Masyhur ມັກກັບບົດບາດຂອງ ລາວ ທີ່ເປັນ ຜູ້ອໍານວຍຄວາມສະດວກ ແລະ ມ່ວນໃນການເຮັດວຽກກັບ ຫຼາຍໆ ບ້ານໃນ ແຂວງ ລົມບົກ (Lombok) ທີ່ມັກເປັນທີ່ຮັບຮູ້ວ່າ ຜະລິດ ສິນຄ້າສະເພາະໃດໜຶ່ງປະຈໍາບ້ານນັ້ນໆ ເຊັ່ນ: ອາຫານ ແລະ ເຄື່ອງຫັດຖະກໍາ, ຫຼື ສິນຄ້າຊົນເຜົ່າ. ລາວໄດ້ກາຍເປັນບຸກຄົນ ສໍາຄັນໃນການສ້າງຕັ້ງ ສິນຄ້າດີຈີຕໍ 6 ຢ່າງ ຂອງ Kampung UKM, ຫຼື SME ດີຈີຕອນ ປະຈໍາບ້ານ ໃນ 6 ຂະແໜງການເຊິ່ງລວມມີ ໄຂ່ເຄັມ, ຕະຫຼາດ ສິນລະປະ, ລວດລາຍຕໍາຜ້າ, ໄຂ່ມຸກ, ໄມ້ໃຜ່ ແລະ ເປືອກໝາກພ້າວ. SME ດີຈີອອນ ປະຈໍາບ້ານ ແມ່ນສູນຮຽນຮູ້ ເຊິ່ງແມ່ນໂຄງການຮ່ວມລະຫວ່າງ ບໍລິສັດ Telekom, ເຊິ່ງເປັນບໍລິສັດ ໂທລະຄົມມະນາຄົມທີ່ໃຫ່ຍທີ່ສຸດໃນ ອິນໂດເນເຊຍ, ແລະ ກະຊວງ ສະຫະກອນ ແລະ ທຸລະກິດຂະໜາດນ້ອຍ. SME ດີຈີຕອນ ປະຈໍາ ບ້ານ ແມ່ນ ຮ້ານແບບຄົບວົງຈອນໃນການຢ້ຽມຢາມ ຄັ້ງດຽວ (One-Stop-Shop), ສໍາລັບທຸລະກິດຂະໜາດນ້ອຍ ເຊິ່ງຊ່ວຍໃຫ້ ນັກສິນລະປະ ຫຼາຍຄົນ ແລະ ຊຸມຊົນທີ່ຜະລິດສິນຄ້າ ໃນຂະແໜງການດັ່ງກ່າວ ສາມາດເຂົ້າຫາຂໍ້ມູນທາງອອນລາຍ, ໂຄສະນາສິນຄ້າຂອງພວກເຂົາ ແລະ ຂະຫຍາຍຕະຫຼາດດີຈີຕໍ ຂອງ ບ້ານພວກເຂົາ ເພື່ອເຮັດໃຫ້ທຸລະກິດ ຂອງ ພວກເຮົາຂະຫຍາຍຕົວຫຼາຍຂຶ້ນຕື່ມ





ທ່ານ Masyhur ເຊື່ອວ່າ: ສະຖາບັນ ແມ່ນແຫຼ່ງຂໍ້ມູນຄວາມຮູ້ທີ່ສໍາຄັນ ເຊິ່ງສາມາດນໍາໃຊ້ ໄດ້ຢ່າງກ້ວາງຂວາງ ສໍາລັບ SME ດີຈີຕໍ ປະຈໍາບ້ານ. ລາວຍັງມີຄວາມເຫັນວ່າ ບັນດາບໍລິສັດທີ່ໂດ່ງດັງລະດັບໂລກເຊັ່ນ: Google, HP Life, Microsoft, ແລະ P&G ແມ່ນ ຍິນດີທີ່ຈະແລກປ່ຽນຄວາມຮູ້ໂດຍຜ່ານ Academy. ທ່ານ Masyhur ຍັງດີໃຈທີ່ວ່າ ປະຊາຊົນໃນຊຸມຊົນຍັງສາມາດເຂົ້າມາ ບ້ານ ດີຈີຕອນ ເພື່ອຮຽນຮູ້ເອົາຄວາມຮູ້ໂດຍກົງຈາກ ຊ່ຽວຊານ ບໍລິສັດລະດັບໂລກ ຜ່ານບັນດາຫຼັກສູດຮຽນຂອງ Academy.

ໂດຍການຜ່ານການຝຶກອົບຮົມກ່ຽວກັບ Academy ທີ່ລາວໄດ້ຮັບການຝຶກອົບຮົມ ທີ່ ຈັກກາຕາ, ທ່ານ Masyhur ໄດ້ມີຄວາມໝັ້ນໃຈໃນການນໍາໃຊ້ SME ດີຈີຕໍ ຂັ້ນ ບ້ານເພື່ອ ອໍານວຍຄວາມສະດວກ ດ້ານການບໍລິຫານທຸລະກິດ, e-Commerce, ການສ້າງເວັບໄຊ໌, ຄວາມຖືກຕ້ອງທາງກົດໝາຍ ຂອງ ຜະລິດຕະພັນ ແລະ ທຸລະກິດ, ເຊັ່ນດຽວກັນກັບ ການຊອກຫາຜົນປະໂຫຍດສູງສຸດຈາກ ແອັບພລິເຄເຊິນ ບາງອັນຢູ່ອອນລາຍ ເພື່ອຊ່ວຍໃນການບັນຊີ ແລະ ສົ່ງເສີມການດໍາເນີນທຸລະກິດ. ທ່ານ Masyhur ເລີ່ມສອນ ສ່ວນຕົວເປັນ ປະຈໍາອາທິດ ເປັນລາຍບຸກຄົນ ຕົວຕໍ່ຕົວສະເພາະ ກ່ຽວກັບ ດີຈີຕໍ ປະຈໍາບ້ານ. ມາເຖິງປະຈຸບັນ, ລາວໄດ້ສອນນັກຮຽນລາວທັງໝົດ 12 ຄົນ, ເຊິ່ງສ່ວນໃຫ່ຍແມ່ນ ຜູ້ປະກອບການທຸລະກິດຂະໜາດນ້ອຍ ໃນຂົງເຂດອາຫານ. ຫຼັກສູດສອນສ່ວນຕົວ ຢູ່ທີ່ ສູນ ຄໍາປັ້ງ ດີຈີຕອູນ (khampung) ແມ່ນກວດເອົາຫົວຂໍ້ທີ່ຫຼາກຫຼາຍ ຂຶ້ນກັບຄວາມຕ້ອງການຂອງຜູ້ເຂົ້າຮ່ວມ ແລະ ຄວາມຫຼາກຫຼາຍ ຂອງ ຫົວຂໍທີ່ພົບເຫັນຢູ່ Academy ເຊິ່ງເຮັດໃຫ້ການສອນສ່ວນຕົວ ຕາມຄວາມຕ້ອງການແບບນີ້ເກີດຂຶ້ນໄດ້.



**Wahyu Heniwati**

ພະນັກງານຄັງເງິນ ຂອງ ສະມາຄົມ ການບໍລິການພັດທະນາທຸລະກິດ ຂອງ ອິນໂດເນເຊຍ (ABDSI), ໂຢງຢາກາຕາ (Yogyakarta), ພາກກາງ ຂອງ ຈາວາ (Java)

**ອິນໂດເນເຊຍ**

*" SMEs ຕ້ອງໄດ້ຮຽນຮູ້ວິທີ ປັບຕົວເຂົ້າກັບສະພາບ ແລະ ນໍາໃຊ້ເທັກໂນໂລຍີໃໝ່ໃຫ້ເຂົ້າ ກັບຄວາມຕ້ອງການຂອງຕະຫຼາດ. ຊ່ອງທາງອອນລາຍແຫ່ງນີ້ແມ່ນ ສ້າງແຮງບັນດານໃຈໃຫ້ຂ້ອຍ ແລະ SMEs ໃນຂົງເຂດຂອງຂ້າພະເຈົ້າ ໃຫ້ຮຽນຮູ້ກ່ຽວກັບ ເທັກ ໂນໂລຍີໃໝ່ ແລະ ເລີ່ມປະຕິ ບັດຕາມ "ຮູບແບບ ດີຈີຕອນ", ການໃຊ້ຊີວິດຢູ່ໃນຍຸກດີຈີຕອນ."*

ທ່ານນາງ Wahyu Heniwati, ຫຼື Heni, ໄດ້ຮັບຮູ້ທັນທີ່ວ່າ ASEAN SME Academy (ຫຼື Academy) ແມ່ນສິ່ງທີ່ SMEs ທີ່ນາງໄດ້ເຮັດວຽກນໍາ ຈະສາມາດໄດ້ຮັບຜົນປະໂຫຍດນໍາໄດ້ ໃນເມືອງ ບານທູລ (Bantul), ຕັ້ງຢູ່ໃຈ ກາງຈາວາ (Java). ທ່ານນາງ Heni, ປະຈຸບັນກໍາລັງເຮັດວຽກຢູ່ໃນສະມາຄົມ ໃຫ້ການບໍລິການດ້ານ ການພັດທະນາທຸລະກິດ (ABDSI) ຢູ່ທີ່ ໂຢງຢາກາຕາ (Yogyakarta) ເຊິ່ງທໍາອິດ ເຊິ່ງເປັນຊ່ວງທີ່ນາງໄດ້ເລີ່ມຮຽນຢູ່ທີ່ Academy ກ່ຽວກັບ ປະເພດຫຼັກສູດສະເພາະ ໃນແຕ່ລະຂັ້ນຕອນ ຂອງ ການພັດທະນາທຸລະ ກິດຈາກ ເລີ່ມຕົ້ນລິເລີ່ມທຸລະກິດໃໝ່ ຈົນໄປເຖິງ ຂັ້ນສາມາດສົ່ງອອກໄດ້.

ທ່ານນາງ Heni ເຮັດວຽກກັບ ຜູ້ປະກອບການຍິງ ໃນທຸລະກິດຂະໜາດ ຈຸລະພາກ ແລະ ນ້ອຍໃນ 10 ບ້ານ ໃນເມືອງ Bantul. ສ່ວນໃຫ່ຍແມ່ນ ທຸລະກິດເຮັດ ເຂົ້າໜົມເຊັ່ນ: bakpia, ຂະໜົມອົບທ້ອງຖິ່ນ ຫຼື ຂະໜົມຈີນອື່ນໆ. ຜ້າ ບາຕິກ ລາຍຕ່າງໆ. ພາຍຫຼັງຈົບຫຼັກສູດຝຶກອົບຮົມ ຢູ່ ຈັກກາຕາ, Heni ເລີ່ມນໍາສະເໜີ ຊ່ອງທາງຮຽນຮູ້ທາງອອນລາຍໃຫ້ ແກ່ ຜູ້ປະກອບການຍິງ 25 ຄົນ ທີ່ນາງເຮັດວຽກຮ່ວມນໍາໃຫ້ຮັບຮູ້, ໂດຍສະເພາະ ຫຼັກສູດຮຽນທີ່ນາງຄິດວ່າ ຈະສາມາດສ້າງຄວາມສາມາດໃຫ້ແກ່ ທຸລະກິດແມ່ຍິງ, ເຊັ່ນ: ຫຼັກສູດຮຽນພື້ນ ຖານດ້ານການເງິນ, ການຕະຫຼາດ ແລະ ການບໍລິຫານທຸລະກິດ ແລະ ການເປັນຜູ້ນໍາ.

ສິ່ງທ້າທາຍຫຼັກທີ່ ຜູ້ປະກອບການຍິງ ທີ່ທ່ານນາງ Heni ພົບພໍ້ ກໍ່ແມ່ນ ຄວາມຫຍຸ້ງຍາກ ທີ່ຕ້ອງຮັບພາລະວຽກເຮືອນ ໄປພ້ອມໆກັບການດໍາເນີນ ທຸລະກິດ ຂອງ ພວກເຂົາເອງ, ເຊິ່ງເຮັດໃຫ້ພວກເຂົາມີເວລານ້ອຍ ໃນການ ຮຽນ ຫຼັກສູດອື່ນໆ ເຊັ່ນ Academy. ອີກຢ່າງໜຶ່ງ, ການທີ່ບໍ່ສາມາດ ເຂົ້າເຖິງອິນ ເຕີເນັດໄດ້ແບບງາຍດາຍ ກໍ່ແມ່ນອຸປະສັກທີ່ເຮັດ ໃຫ້ພວກເຂົາ ບໍ່ສາມາດຮຽນໄດ້ ເຖິງວ່າພວກເຂົາມີເວລາຫວ່າງ. ສະນັ້ນ, ທ່ານນາງ Heni ໄດ້ຊອກຫາທາງອອກ ໂດຍການສ້າງຄູ່ມືແນະນໍາສະເພາະໃຫ້ແຕ່ລະ ຫຼັກສູດຮຽນ ຂອງ Academy ທີ່ໄດ້ມີການຄັດເລືອກເອົາວິຊາຮຽນ ທີ່ນາງຄິດວ່າ ຈະສາມາດສ້າງຄວາມສາມາດໃຫ້ ແມ່ຍິງເຫຼົ່ານີ້ໄດ້ສະເພາະ ເຊັ່ນ: ພື້ນຖານການເງິນ ແລະ ວິຊາຮຽນທີ່ເໜັ້ນໜັກໃສ່ ທັກສະການຕັດສິນໃຈ.





ເພື່ອແກ້ໄຂ ບັນຫາການເຂົ້າເຖິງອິນເຕີເນັດ, ທ່ານນາງ Heni ໄດ້ເປັນຜູ່ອໍານວຍຄວາມ ສະດວກໃນ ກຸ່ມສົນທະນາ ກ່ຽວກັບ ກໍລະນີສຶກສາ ທີ່ມາຈາກ ວິຊາຮຽນ ທີ່ນາງໄດ້ຄັດເລືອກ ໄວ້ໃນຄູ່ມືແນະນໍາຂອງນາງ. ວິທີການສອນແບບນີ້ ໄດ້ສະແດງໃຫ້ເຫັນບໍ່ພຽງແຕ່ວ່າ ທ່ານນາງ Heni ສາມາດແກ້ໄຂສິ່ງທ້າທາຍ ຂອງ ການບໍ່ມີອິນເຕີເນັດໄດ້, ແຕ່ນາງຍັງສາມາດ ສ້າງມູນຄ່າເພີ່ມ ແລະ ຄັດເລືອກວິຊາຮຽນ ທີ່ສາມາດສ້າງຄວາມສາມາດ ໃຫ້ແກ່ ຜູ້ປະກອບການຍິງ ໄດ້ອີກດ້ວຍ.

ເຖິງແມ່ນວ່າ ຊ່ອງທາງໃນການຮຽນດັ່ງກ່າວນໍາໃຊ້ພາສາອັງກິດ, ທ່ານນາງ Heni ຍັງຮູ້ສຶກວ່າ ເນື້ອໃນຂອງຊ່ອງທາງຮຽນນີ້ ແລະ ຫຼັກສູດດັ່ງກ່າວ ແມ່ນສາມາດເຂົ້າໃຈໄດ້ງ່າຍ. ໃນທັດສະນະຂອງລາວ, Academy ສາມາດນໍາໃຊ້ເພື່ອ ສ້າງແຮງບັນດາໃຈ ໃຫ້ຜູ້ນໍາໃຊ້ ໂດຍການເກັບກ່ຽວເອົາ ຜົນປະໂຫຍດຂອງການດໍາລົງຊີວິດໃນຍຸກ ດີຈີຕອນ. ໃນຂະນະທີ່, ຜູ້ປະກອບການຍິງ ໃນບ່ອນທີ່ນາງເຮັດວຽກຢູ່ນັ້ນ ມີຄວາມຫຍຸ້ງຍາກ ໃນການຈັດສັນເວລາ ເຊັ່ນດຽວກັນກັບ ການຮຽນຮູ້ເທັກໂນໂລຍີໃໝ່, ພວກເຂົາແມ່ນກໍາລັງເປີດຮັບ ເອົາເຄື່ອງມືດີຈີຕອນອື່ນໆ ເພື່ອປັບປຸງ ທຸລະກິດຂອງພວກເຂົາເອງ. ນັກປະກອບການຍິງສ່ວນໃຫ່ຍ ແມ່ນມີຄວາມຕື່ນເຕັ້ນ ໃນການນໍາໃຊ້ ສື່ສັງຄົມເຊັ່ນ: Facebook ແລະ ແອັບພຣິເຄເຊີນອື່ນໆ ສໍາລັບໂທລະສັບມືຖືທີ່ໃຊ້ໄວ້ຕິດຕໍ່ຫາກັນ ເຊັ່ນ: Whatsapp

# ໄດ້ຮັບການສະໜັບສະໜູນຈາກ ຜູ້ອໍານວຍຄວາມສະດວກທີ່ມີທັກສະ



Academy ແມ່ນມີຜູ້ຊ່ວຍທີ່ແມ່ນກຸ່ມຜູ້ອໍານວຍຄວາມສະດວກ ທີ່ມີທັກສະເຊິ່ງພວກເຂົາພ້ອມແລ້ວທີ່ຈະຊ່ວຍທ່ານຮຽນຫຼັກສູດຝຶກອົບຮົມໃຫ້ສໍາເລັດ.

ການຝຶກອົບຮົມຂອງພວກເຮົາຊ່ວຍໃຫ້ທ່ານໄດ້ ສາມາດເກັບກ່ຽວ ເອົາຜົນປະໂຫຍດທີ່ດີທີ່ສຸດຈາກ Academy. ພວກເຮົາ ສົ່ງເສີມໃຫ້ຜູ້ອໍານວຍຄວາມສະດວກໄດ້ຮຽນຮູ້ ຫ້ອງຮຽນນີ້ເປັນຢ່າງດີ, ເຊັ່ນ ດຽວກັນກັບເຂົ້າໃຈ ກັບ ຜົນປະໂຫຍດ ຂອງແຕ່ລະຄຸນລັກສະນະ ທີເປັນອົງປະກອບຂອງ ການຮຽນໃນ Academy. ເປັນຜູ້ອໍານວຍ ຄວາມສະດວກມີການເຊື່ອມຕໍ່ກັນໂດຍຜ່ານ ເຄື່ອຂ່າຍຄວາມເຊື່ອໝັ້ນ (Brain Trust Network) ເພື່ອທີຈະແລກປ່ຽນຄວາມຮູ້ສະເພາະດ້ານ ແລະ ປະສົບການ ຂອງພວກເຂົາໃນລະດັບ ການດໍາເນີນງານ ຖ້າທ່ານຍັງມີບັນຫາໃນການເຂົ້າເຖິງ Academy ຫຼື ຖ້າທ່ານຕ້ອງຝຶກອົບຮົມ ກຸ່ມນັກປະກອບການ SMEs ກ່ຽວກັບການນໍາໃຊ້ Academy, ທ່ານ ສາມາດສະເໜີໃຫ້ມີການຊ່ວຍເຫຼືອຈາກຜູ້ອໍານວຍຄວາມສະດວກ ຂອງພວກເຮົາໄດ້.

# ສະຖາບັນ SME ສປປ ລາວ ແລະ ອາຊຽນ ໃນເຄືອຄ່າຍ Brain Trust

## Bounkane Vongkhamchane

**E.** oudy_bv@hotmail.com
**M.** +856 20 22215040

**Mastered Course:**
- Effective Business Website





## Khamphouy Vilaysouk

**E.** khamphouy84@yahoo.com
**M.** +856 20 22225303

**Mastered Course:**
- Strategic Planning



## Bounyouang Oudomphone

**E.** my_star003@hotmail.com
**M.** +856 20 22843345

**Mastered Course:**
- Energy Efficiency: Do More for Less

## Mahaxay Thammavongsa

**E.** mahaxay1978@yahoo.com
**M.** +856 30 5334001

**Mastered Course:**
- Strengthening Global Presence through Online Marketing



## Khamphanh Luangamath

**E.** sluangamath@gmail.com
**M.** +856 20 55792010

**Mastered Course:**
- Business Email





## Neevanh Saynavong

**E.** neevanh@yahoo.com
**M.** +856 20 5556 1968

**Mastered Courses:**
- Selling Online
- Setting Prices



**Netkham Southaluck**

**E.** Netkhams@yahoo.com
**M.** +856 20 99839020

**Mastered Course:**
- Sales Forecasting

**Savalith Sengsath**

**E.** raso@nuol.edu.la
**M.** +856 20 56471170

**Mastered Course:**
- Hiring Staff



**Nilanlath Sramany**

**E.** nsramany87@gmail.com
**M.** +856 20 56413181

**Mastered Course:**
- Effective Presentation





**Siamphone Manilatsamy**

**E.** Siamphone1981@gmail.com
**M.** +856 20 96067788

**Mastered Course:**
- Boost Your Business with Facebook



**Nithniranh Outhoumphong**

**E.** aly_csnv15@yahoo.com
**M.** +856 20 55639292

**Mastered Course:**
- Social Media Marketing

**Sibounheuang Xiong**

**E.** sibounheuangerit2013@gmail.com
**M.** +856 20 95556578

**Mastered Course:**
- Getting the Most Value from Card Acceptance



## Sivixay Xayyaseng

E. sivixayxayyaseng@gmail.com
M. +856 20 99333569

**Mastered Course:**
- Connecting Global Commerce



## Soudthida Hoongsengpha



E. soudthida@gmail.com
M. +856 20 55842828

**Mastered Course:**
- Presenting Data

## Soulikhan Keo Onsy

E. soulikhan@hotmail.co.th
M. +856 2054756666

**Mastered Course:**
- Unique Value Proposition



## Viengsing Thongmanivong

E. singpower2020@yahoo.com
M. +856 20 97778885

**Mastered Course:**
- Your Target Audience



## Vilasack Vannadeth



E. vilasack2015@gmail.com
M. +856 20 55414125

**Mastered Course:**
- Managing Contact Information

## Visay Sayyavongsa

E. visay.edc@gmail.com
M. +856 20 54500077

**Mastered Course:**
- Tool for Business Plan Development



## Vongsaysana Sayakoummane



E. kousayako@gmail.com
M.+856 20 22444455

**Mastered Course:**
- Marketing Benefits vs Features



ASEAN SME Academy

www.asean-sme-academy.org

USAID FROM THE AMERICAN PEOPLE

US-ASEAN CONNECT partnering for sustainable, innovative, economic growth

US-ASEAN

The ASEAN SME Academy is a multi-stakeholder effort under the US-ASEAN Business Alliance for Competitive SMEs, a collaboration among USAID, the US-ASEAN Business Council and ASEAN, and ASEAN's support is through the ASEAN Coordinating Committee on Micro, Small and Medium Enterprises.